ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫລວງວຽງຈັນ

ເມືອງ ສີສັດຕະນາກ

ເລກທີ 170/ຈມ.ສສນ

ລົງວັນທີ 14 ພຶດສະພາ 2024

ສໍານັກງານອົງການປົກຄອງ ນວ ຂາເຂົ້າ

ໜ່ວຍງານບໍລິການປະຕູດຽວ

ເລກທີ: 2168

ວັນທີ: 15.5.24

## ບົດລາຍງານ

ຮຽນ : ທ່ານເຈົ້າຄອງ ນະຄອນຫລວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ : ລາຍງານກ່ຽວກັບການສະເໜີແລກປ່ຽນທີ່ດິນ ແລະ ສິ່ງປຸກສ້າງຫ້ອງການບ້ານຫລັງໃໝ່ ລະຫວ່າງ ອົງການປົກຄອງບ້ານດອນກອຍ ແລະ ບຸກຄົນ, ເພື່ອຂໍການພິຈາລະນາອະນຸມັດ.

- ອີງຕາມ ໜັງສືທາງລັດຖະການ ສະບັບເລກທີ ສະບັບເລກທີ 1185/ຫອນວ; ລົງວັນທີ 26/ມິຖຸນາ/2023 ຂອງຫ້ອງວ່າການນະຄອນຫລວງວຽງຈັນ.
- ອີງຕາມ ຜົນຂອງກອງປະຊຸມ ຄັ້ງວັນທີ 26 ເມສາ 2024.

ເຈົ້າເມືອງ ສີສັດຕະນາກ ຂໍຖືເປັນກຽດລາຍງານ ມາຍັງທ່ານ ເຈົ້າຄອງ ນະຄອນຫລວງວຽງຈັນ ເພື່ອຂໍຄໍາເຫັນຊີ້ນໍາໃນການຈັດຕັ້ງປະຕິບັດ ການແລກປ່ຽນທີ່ດິນ ເພື່ອໃຫ້ຖືກຕາມຂັ້ນຕອນ ແລະ ລະບຽບຫລັກການດັ່ງນີ້:

ພາຍຫລັງໄດ້ຮັບ ໜັງສືທາງລັດຖະການ ສະບັບເລກທີ ສະບັບເລກທີ 1185/ຫອນວ; ລົງວັນທີ 26/ມິຖຸນາ/2023 ຂອງຫ້ອງວ່າການນະຄອນຫລວງວຽງຈັນ ເມືອງຂອງພວກເຮົາ ໄດ້ເຊີນ ພະແນກການທີ່ກ່ຽວຂ້ອງຄື : ຕາງໜ້າພະແນກການເງິນນະຄອນຫລວງວຽງຈັນ, ຕາງໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພາກສ່ວນຕ່າງໆຂອງເມືອງທີ່ກ່ຽວຂ້ອງ ໂດຍສົມທົບກັບ ອົງການປົກຄອງບ້ານດອນກອຍ ເພື່ອປຶກສາຫາລື ດ້ານກົນໄກລະບຽບການ ແລະ ຂັ້ນຕອນທາງດ້ານກົດໝາຍ ຜ່ານການຄົ້ນຄ້ວາ ໄດ້ເອກະພາບກັນດັ່ງນີ້ :

- ເອກະພາບໃນເບື້ອງຕົ້ນ ເຫັນດີ ສະເໜີໃຫ້ການນໍາ ນະຄອນຫລວງວຽງຈັນ ເພື່ອຂໍການພິຈາລະນາອະນຸມັດ ເນື່ອງຈາກວ່າ ສັງຄົມກໍ່ຄືພາກລັດ ຂອງພວກເຮົາໄດ້ຮັບຜົນປະໂຫຍດ.
- ເອກະພາບ ຕາມການປະເມີນສົມທຽບ ລາຄາ ຜ່ານການຄິດໄລ່ປະເມີນສົມທຽມ (ບົດລາຍງານ ສະບັບເລກທີ 171/ຈສ.ສສນ; ລົງວັນທີ 19/ມິຖຸນາ/2023)

**ຕອນທີ 01:** ວັດແທກໄດ້ເນື້ອທີ່ 154 ຕາແມັດ ນອນຢູ່ໃນເຂດປະເມີນ D7 ເປັນທາງຫຼັກ(1), ລາຄາປະເມີນແມ່ນ 2.500.000 ກີບ ຕໍ່ ຕາແມັດ, ເທົ່າກັບ 154 ຕາແມັດ x 2.500.000 ກີບ = 385.000.000 ກີບ.

- ລາຄາຕາມທ້ອງຕະຫຼາດແມ່ນ 300 ໂດລາ ຕໍ່ ຕາແມັດ, (ອັດຕາແລກປ່ຽນ 1 ໂດລາ = 18.000 ກີບ) ເທົ່າກັບ 300 ໂດລາ x 18.000 ກີບ = 5.400.000 ກີບ;
- ເທົ່າກັບ 154 ຕາແມັດ x 5.400.000 ກີບ = 831.600.000 ກີບ.
- ສິ່ງປຸກສ້າງ (ຫ້ອງການບ້ານດອນກອຍ ໃນປະຈຸບັນ) ປຸກປີ 2003, ເຊິ່ງທີ່ຂະໜາດ 5 ແມັດ x 16 ແມັດ = 80 ຕາແມັດ, ເນື້ອທີ່ດິນ 80 ຕາແມັດ x 1.050.000 ກີບ = 84.000.000 ກີບ.

- ລວມລາຄາປະເມີນທີ່ດິນ ແລະ ສິ່ງປຸກສ້າງຫ້ອງການປະຈຸບັນ = 915.600.000 ກີບ.

**ຕອນທີ 02:** ວັດແທກໄດ້ເນື້ອທີ່ 1.331 ຕາແມັດ ນອນຢູ່ໃນເຂດປະເມີນ D7 ເປັນທາງຮ່ອມ, ລາຄາປະເມີນແມ່ນ 400.000 ກີບ ຕໍ່ ຕາແມັດ, ເທົ່າກັບ 1.331 ຕາແມັດ x 400.000 ກີບ = 532.400.000 ກີບ.

- ລາຄາຕາມທ້ອງຕະຫຼາດແມ່ນ 3.000 ບາດ ຕໍ່ ຕາແມັດ, (ອັດຕາແລກປ່ຽນ 1 ບາດ = 500 ກີບ) ເທົ່າກັບ 3.000 ບາດ x 500 ກີບ = 1.500.000 ກີບ;
- ເທົ່າກັບ 1,331 ຕາແມັດ x 1.500.000 ກີບ = 1.996.500.000 ກີບ.

ລວມລາຄາທີ່ດິນ ແລະ ສິ່ງປຸກສ້າງໃຫ້ໃໝ່ = 1.996.500.000 ກີບ + **574.717.000** ກີບ

ລວມທັງໝົດ = 2.571.217.000 ກີບ.

- ເຫັນວ່າຫລຸດລົ່ນ ຢູ່ **1,655,617,000** ກີບ (ໜຶ່ງຕື້ຫົກຮ້ອຍຫ້າສິບຫ້າລ້ານຫົກແສນສິບເຈັດພັນກີບ) ຊຶ່ງລັດເຮົາໄດ້ຮັບຜົນປະໂຫຍດ ແລະ ມາຮອດປະຈຸບັນນີ້ ຜູ້ສະເໜີຂໍແລກປ່ຽນທີ່ດິນ ຫ້ອງການບ້ານດອນກອຍ ແມ່ນຍັງຢັ້ງຢືນທີ່ຈະແລກປ່ຽນ.

ທັດສະນະຂອງອົງການປົກຄອງເມືອງ ສີສັດຕະນາກ ກໍ່ເຫັນດີສົມຄວນໃຫ້ມີການແລກປ່ຽນ ເນື່ອງຈາກວ່າ :

- ພາກລັດ ແລະ ສັງຄົມໄດ້ຮັບຜົນປະໂຫຍດ, ເປັນການພັດທະນາອົງການປົກຄອງທ້ອງຖິ່ນຂັ້ນຮາກຖານ ໃນການບໍລິການປະຊາຊົນ ໃຫ້ນັບມື້ນັບດີຂຶ້ນ.
- ຕອບສະໜອງໄດ້ ບ່ອນເຮັດວຽກທີ່ມີຄຸນນະພາບ ແລະ ຮັບປະກັນໃນແຕ່ລະດ້ານ.
- ບັນຫາສະເໜີ : ຜູ້ສະເໜີ ຂໍແລກປ່ຽນທີ່ດິນ ສະເໜີວ່າ ຖ້າຫາກຂັ້ນເທິງອະນຸມັດເຫັນດີໃຫ້ມີການແລກປ່ຽນ ຕົນເອງຂໍໃຫ້ມີການຄົ້ນຄວ້າການຍົກເວັ້ນ ອາກອນໃນການມອບ-ໂອນ ສິດນຳໃຊ້ທີ່ດິນ ລະຫວ່າງທີ່ດິນຂອງລັດມາເປັນຂອງບຸກຄົນ ແລະ ຂອງບຸກຄົນມາເປັນຂອງລັດ ເນື່ອງຈາກ ຕົນເອງກໍ່ໄດ້ປະກອບສ່ວນໃນການແລກປ່ຽນທີ່ດິນ ແລະ ປຸກສ້າງຫ້ອງການບ້ານຫລັງໃໝ່ໃຫ້ ແມ່ນມີມູນຄ່າສູງ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເຈົ້າຄອງ ນະຄອນຫລວງວຽງຈັນ ເພື່ອຊາບ ແລະ ພິຈາລະນາອະນຸມັດຕາມສົມຄວນດ້ວຍ.

**ເຈົ້າເມືອງ ສີສັດຕະນາກ**

ເດດສົງຄາມ ທຳມະວົງ